ພັກແລະກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento. CA. 95818 U.S.A
www.laofreedom.com

ສູນກາງຕາງໜ້າ

ພັກແລະກຳລັງທັບເສຣີປະຊາທິປະໄຕລາວ

* ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.

ເລກທີ 391 /ປພຖຂ/020417.

# ຖແລງການ

## ສັນຣະເສີນວັນຄົບຮອບ 75 ປີ ຂອງ VOA.

ພວກເຮົາປະຊາຊົນພັກເສຣີປະຊາທິປະໄຕລາວ ໄດ້ອອກຖແລງການສບັບນີ້ເພື່ອສແດງ ຄວາມຍ້ອງຍໍສັນຣະເສີນ,ການສເລີມ,ສລອງວັນທີ 1 ກຸມພາ 2017, ຄົບຮອບ 75 ປີ ແຫ່ງ ການກະຈ່າຍສຽງຂອງ VOA.

ການອອກອາກາດຢ່າງຕໍ່ເນື່ອງຂອງ VOA, ພາຍຫລັງທີ່ສຫຣໄດ້ເຂົ້າຮ່ວມສົງຄາມໂລກຄັ້ງທີ2, ໃນປີ1942,ມາຮອດເທົ່າທຸກວັນນີ້,ຖືວ່າເປັນການກະຈ່າຍສຽງທີ່ມີຄຸນນະພາບດີຫລາຍ,ແລະມີ ລັກຊນະ,ປະວັດສາດ,ນຳເອົາ ຂ່າວ ຄວາມເປັນຈິງທີ່ເກີດຂຶ້ນ ມາອອກອາກາດ ເປັນຫລາຍພາສາ, ເພື່ອໃຫ້ປະຊາຄົນໂລກໄດ້ຍິນ,ໄດ້ຟັງຢ່າງທົ່ວເຖີງ.

ພວກເຮົາເຫັນວ່າຣາຍການກະຈ່າຍສຽງຂອງVOA ໄດ້ພັທະນາ ໄປໄກຫລາຍ ເພາະມີລັກຊນະຄົບຖ້ວນ, ໂດຍສເພາະການກະຈ່າຍສຽງເປັນພາສາລາວ.

ເປັນທີ່ຮູ້ກັນດີຢູ່ວ່າ ຄົນລາວໃນທົ່ວໂລກໄດ້ພາກັນຈົດຈໍ່ ຕິດຕາມຟັງຂ່າວ ຈາກVOA ເປັນປະຈຳ.

ພວກເຂົາ, ບໍ່ພຽງແຕ່ຢາກຮູ້ຂ່າວການປ່ຽນແປງໃໝ່ໆໃນລາວເທົ່ານັ້ນ,ພວກເຂົາ ຍັງຢາກຮູ້ ສາ ຣະຄະດີຕ່າງໆ,ຢາກຮູ້ ການໄຊ້ສຳນວນ ພາສາອັງກິດ,ຢາກຮູ້ຄວາມກ້າວໜ້າທາງດ້ານເຕັກນິກ-ວິທະຍາສາດ,ແລະຄວາມສຳເຣັດໃນການສ້າງຊີວິດໃໝ່ຂອງຄົນລາວຢູ່ຕ່າງແດນແລະຄວາມສຳ ເຣັດໃນການຮ່ຳຮຽນຂອງລູກຫລານ,ທີ່ ທີມງານຂອງ VOA. ໄດ້ຮວບຮວມມາສເນີ, ນຳດ້ວຍ.

ລາຍການVOAຖືວ່າເປັນແຫຼ່ງໃຫ້ຄວາມຮູ້ທີ່ສຳຄັນຫລາຍໃນການດຳຣົງຊີວິດ ຢູ່ໃນໂລກປະຈຸບັນ, ເປັນໂຮງຮຽນນອກຣະບົບ,ບໍ່ມີພົມແດນ, ສາມາດເຂົ້າເຖິງຄົນລາວທີ່ແຈກຢາຍກັນໃນທົ່ວໂລກໄດ້ ເປັນຢ່າງດີ.

ພວກເຮົາ, ຂໍສແດງຄວາມຍ້ອງຍໍສັນຣະເສີນ ແລະດີໃຈນຳ ທີມງານ VOA. ມານະທີ່ນີ້ດ້ວຍ.

ພວກເຮົາຫວັງວ່າ,ຄົນລາວ ຄົງຈະໄດ້ຕິດ ຕາມຂ່າວການແກ້ໄຂບັນຫາລາວ, ຕາມແນວ ທາງ ສັນຕິວິທີ,ທີ່ສາກົນແລະກູ່ມພາຄີຮ່ວມ 15 ປະເທດໄດ້ອູມຊູສນັບສນູນ, ມາອອກ ໃນ ລາຍການ VOA, ພາກພາສາລາວ, ບໍ່ວັນໃດກໍ່ວັນນື່ງໃນອານາຄົດຂ້າງໜ້າ.

ປະຊາຊົນມີໄຊ ເສຣີປະຊາທິປະໄຕອົງອາດ ຊາດລາວຈົງຈເຣີນ

ຂໍຂອບໃຈ

ສູນກາງຕາງໜ້າ

ພັກແລະກຳລັງທັບເສຣີປະຊາທິປະໄຕລາວ

ຫ້ອງການປະທານພັກ

ອາຈານ ສົມນຶກ ຝອງສູວັນ

ວັນທີ 4 ກູມພາ 2017